


# ໂຄງການພາກພື້ນ ກ່ຽວກັບ ການຄຸ້ມຄອງນ້ຳ ແລະ ຄວາມໝັ້ນຄົງດ້ານສິ່ງແວດລ້ອມຂ້າມຜ່ານຊາຍແດນຢູ່ ອ່າງຮັບນ້ຳ ນ້ຳມ້າ ແລະ ນ້ຳເນີນ-ນ້ຳກາ ແລະ ພື້ນທີ່ ທີ່ຕິດພັນກັບຊາຍຝັ່ງທະເລ.

## ສັງລວມຫຍໍ້

ໂຄງການນີ້ ແມ່ນການຮ່ວມມືສອງຝ່າຍລະຫວ່າງ ສປປ ລາວ ແລະ ສ
ຫວຽດນາມ ພາຍໃຕ້ກອງທຶນສິ່ງແວດລ້ອມໂລກ,ໂດຍສຸມໃສ່ການຄຸ້ມຄອ
ອ່າງຮັບນ້ຳຂ້າມຜ່ານຊາຍແດນ ນ້ຳມ້າ ແລະ ນ້ຳເນີນ-ນ້ຳກາ
ອ່າງຮັບນ້ຳເຫຼົ່ານີ້ແມ່ນມີລັກສະນະຂອງພື້ນທີ່ ແລະ ສິ່ງທ້າທາຍຄ້າຍຄືກັນ ເປັນຕົ
ການພັດທະນາເສດຖະກິດ-ສັງຄົມນັບມື້ນັບເພີ່ມຂຶ້ນ,
ການປ່ຽນແປງການນຳໃຊ້ທີ່ດິນ ແລະ ການປ່ຽນແປງດິນຟ້າອາກາ
ເຊິ່ງອາດມີຜົນກະທົບຕໍ່ລະບົບນິເວດ ແລະ ສິ່ງແວດລ້ອມ ໃນອ່າງຮັບນ້ຳ ດັ່ງກ່າວ

ການປ່ຽນແປງດິນຟ້າອາກາດຄາດວ່າເປັນປັດໄຈສຳຄັນຂອງການປ່ຽນແປງທາງດ້າ
ນອຸທົກກະສາດ, ກະທົບຕໍ່ປະລິມານນ້ຳຝົນ, ອູນຫະພູມ, ການລະເຫີຍອາຍ ແລະ
ຄຸນນະພາບຂອງນ້ຳ. ສະພາບການຂອງນ້ຳໃນອະນາຄົດສະແດງໃຫ້ເຫັນວ່
ການໄຫຼວຽງຂອງນ້ຳຜ່ານລະບົບມີແນວໂນ້ມເພີ່ມຂຶ້ນ
ໂດຍສະເພາະໃນທ້າຍສະຕະວັດ.
ການໄຫຼວຽງຂອງນ້ຳຈະເພີ່ມຂຶ້ນຫຼາຍທີ່ສຸດໃນລະດູຝົນ
ເຊິ່ງເປັນສັນຍານຊີ້ໃຫ້ເຫັນເຖິງຄວາມເປັນໄປໄດ້ຂອງໄພນ້ຳຖ້ວມທີ່ຮຸນແຮງທີ່ສົ່ງຜົ
ນກະທົບຢ່າງໜັກໜ່ວງຕໍ່ການພັດທະນາເສດຖະກິດ.

ການພັດທະນາຢ່າງຕໍ່ເນື່ອງຢູ່ໃນຂົງເຂດອ່າງຮັບນ້ຳສອງອ່າງດັ່ງກ່າວບວກກັບປັດໄ
ການປ່ຽນແປງດິນຟ້າອາກາດກຳລັງສົ່ງຜົນກະທົບຕໍ່ພື້ນທີ່ຊາຍຝັ່ງທະເລຍ້ອນການ
ເສື່ອມໂຊມຂອງຄຸນນະພາບນ້ຳຈືດ ແລະ ນ້ຳທະເລ
ການເພີ່ມຂື້ນຢ່າງຕໍ່ເນື່ອງຂອງໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ
ການລ່ວງລ້ຳແຄມຝັ່ງທະເລ ອັນເກີດມາຈາກການຊົມໃຊ້ນ້ຳໃຕ້ດິນເກີນຂອບເຂ
ແລະ ການເພີ່ມຂື້ນຂອງລະດັບນ້ຳທະເລ
ສະຖານະການທີ່ກຳລັງເກີດຂື້ນພວມເປັນໄພຂົ່ມຂູ່ຢ່າງຮ້າຍແຮງຕໍ່ການສະໜອງນ້ຳ
ໃຫ້ແກ່ປະຊາກອນທີ່ຢູ່ອາໃສຕາມຊາຍຝັ່ງທະເລ ແລະ ການດຳລົງຊີວິ
(ການປູກ-ການລ້ຽງ), ພ້ອມທັງເປັນໄພຂົ່ມຂູ່ຕໍ່ພື້ນທີ່ຊາຍເລນ
ໂດຍສະເພາະແມ່ນປ່າຊາຍເລນ, ດິນບໍລິເວນນ້ຳ ແລະ ບ່ອນຢູ່ຂອງປາ.




© MERFI, 2020

Some rights reserved. This work is available under a CC BY-NC-SA 3.0 IGO licence

© FAO, 2024
CD0079EN/1/03.24

## ຈຸດປະສົງໂຄງການ

ເພື່ອສະໜັບສະໜູນ ສສ ຫວຽດນາມ ແລະ ສປປ ລາວ ໃນການແກ້ໄຂການຄຸ້ມຄອງຊັບພະຍາກອນນ້ຳ ແລະ ລະບົບນິເວດຢູ່ໃນເຂດອ່າງຮັບນ້ຳຂ້າມຜ່ານຊາຍແດນ ນ້ຳມ້າ ແລະ ນ້ຳເນີນ-ນ້ຳກາ ແລະ ເຂດຊາຍຝັ່ງທະເລ ໂດຍການສ້າງເງື່ອນໄຂດ້ານການຮ່ວມມື ແລະ ແຜນດຳເນີນງານ ຂ້າມຜ່ານຊາຍແດນ.

## ຄາດຄະເນຜົນໄດ້ຮັບ

- **ຜົນໄດ້ຮັບທີ 1:** ຄວາມເປັນເອກະພາບລະດັບຊາດ ກ່ຽວກັບ ບັນຫາຫຼັກຂ້າມຜ່ານຊາຍແດນ ລວມທັງການປ່ຽນແປງດິນຟ້າອາກາດ ແລະ ອື່ນໆ ສາມາດບັນລຸໄດ້ດ້ວຍການຊອກຫາຄວາມເປັນຈິງຜ່ານການຮ່ວມມືຂ້າມຜ່ານຊາຍແດນ ແລະ ເປີດຊ່ອງທາງໃນການປະສານງານເພື່ອແກ້ໄຂ.
- **ຜົນໄດ້ຮັບທີ 2:** ເພີ່ມທະວີຄວາມໝັ້ນຄົງດ້ານນ້ຳ, ຄວາມຍືນຍົງດ້ານສິ່ງແວດລ້ອມ ແລະ ຄວາມອາດສາມາດດ້ານການພະຍາກອນ ຢູ່ໃນເຂດອ່າງຮັບນ້ຳທັງສອງ ແລະ ເຂດຊາຍຝັ່ງທະເລ ບັນລຸໄດ້ໂດຍຜ່ານການສ້າງຕັ້ງກົນໄກ ແລະ ກອບວຽກ ການປະສານງານ ແລະ ການເລກປ່ຽນຂໍ້ມູນຂ່າວສານຂ້າມຜ່ານຊາຍແດນ.
- **ຜົນໄດ້ຮັບທີ 3**: ສອງປະເທດໄດ້ຮ່ວມກັນຈັດຕັ້ງປະຕິບັດການທົດລອງວິທີການຄຸ້ມຄອງທີ່ດິນ ແລະ ນ້ຳ ທີ່ເປັນມິດກັບສິ່ງແວດລ້ອມ, ນະໂຍບາຍ, ວິທີການປະຕິບັດ, ເຕັກໂນໂລຊີ ແລະ ການແລກປ່ຽນຜົນໄດ້ຮັບ ແລະ ປະສົບການ.
- **ຜົນໄດ້ຮັບທີ 4:** ຂະບວນການໃນການປ່ຽນທ່າອ່ຽງຂອງການເສື່ອມໂຊມຢູ່ໃນສອງອ່າງຮັບນ້ຳໄດ້ຮັບການແກ້ໄຂໂດຍຜ່ານກົນໄກການຮ່ວມມືສອງຝ່າຍ, ການດຳເນີນການຈັດບຸລິມະສິດ ແລະ ການລົງທຶນ.
- **ຜົນໄດ້ຮັບທີ 5.1:** ຄວາມຍືນຍົງຂອງຜົນໄດ້ຮັບຂອງໂຄງການໄດ້ຮັບການເສີມຂະຫຍາຍໂດຍການເສີມສ້າງຄວາມອາດສາມາດຂອງໜ່ວຍງານລະດັບຊາດ ແລະ ຄະນະປະສານງານຂ້າມຜ່ານຊາຍແດນທີ່ໄດ້ຮັບການສ້າງຕັ້ງຂຶ້ນພາຍໃຕ້ໂຄງການ.
- **ຜົນໄດ້ຮັບທີ 5.2:** ໄດ້ຮັບຜົນປະໂຫຍດລະດັບສາກົນສູ່ທ້ອງຖິ່ນໂດຍການເລກປ່ຽນ ແລະ ການເຜີຍແຜ່ບົດຮຽນ ແລະ ປະສົບການຂອງໂຄງການ.

ສ້າງກົນໄກປະສານງານລະຫວ່າງສອງປະເທດ ສຳລັບ ການຄຸ້ມຄອງອ່າງຮັບນ້ຳ ນ້ຳມ້າ ແລະ ນ້ຳເນີນ-ນ້ຳກາ ຢ່າງມີປະສິດທິພາບໃນໄລຍະຍາວແມ່ນມີຄວາມສຳຄັນຫຼາຍໃນການພັດທະນາ ແບບຍືນຍົງ. ບຸລິມະສິດແມ່ນການຄຸ້ມຄອງຊັບພະຍາກອນນ້ຳໜ້າດິນ ແລະ ນ້ຳໃຕ້ດິນຂ້າມຜ່ານຊາຍແດນຮ່ວມກັນ ໄປຄຽງຄູ່ກັບການເຊື່ອມສານການອະນຸລັກຊີວະນາໆພັນ (ຕົວຢ່າງ: ເຂດເຊື່ອມຕໍ່ການອະນຸລັກຊີວະນາໆພັນ), ການປົກປັກຮັກສາປ່າໄມ້ ແລະ ການຈັດການການປະມົງ ແລະ ການແກ້ໄຂຂໍ້ຂັດແຍ້ງທາງດ້ານອາຫານ, ພະລັງງານ ແລະ ສິ່ງແວດລ້ອມ.

ໂຄງການນີ້ຈະໄດ້ຮັບຮອງເອົາຫຼັກການ ອອກສູ່ທະເລ (S2S), ເຊື່ອມໂຍງກັບບັນດາຂໍ້ລິເລີ່ມຕ່າງໆທີ່ຕິດພັນກັບຂະແໜງການ ແລະ ແຈ້ງໃຫ້ຊາບໂດຍກົງ ກ່ຽວກັບ ການອອກແບບ, ການປະເມີນ, ການວາງແຜນລົງທຶນໃນຂະແໜງການເຫຼົ່ານັ້ນ. ມັນເປັນພື້ນຖານໃຫ້ແກ່ການປະສານງານຂ້າມຜ່ານຊາຍແດນ, ກອບວຽກການຄຸ້ມຄອງອ່າງຮັບນ້ຳ, ເພີ່ມທະວີຄວາມໝັ້ນຄົງດ້ານນ້ຳ ແລະ ສິ່ງແວດລ້ອມ ແລະ ຄວາມສະເໝີພາບຍິງ-ຊາຍ.

## ໄລຍະຂອງໂຄງການ: ເດືອນມັງກອນ 2024 - ເດືອນ ທັນວາ 2028

**ພື້ນທີ່ຂອງໂຄງການ:** ແຂວງ ທັນຮົວ, ແຂວງ ເງອານ, ແຂວງ ຫົວພັນ, ແຂວງ ຊຽງຂວາງ ...

## ຂໍ້ມູນເພີ່ມເຕີມຕິດຕໍ່:

Rien Dam, PhD
Chief Technical Advisor
IUCN Viet Nam Country Office
2A, 298 Kim Ma, Van Phuc Diplomatic Compound
Hanoi, Viet Nam
rien.dam@iucn.org



© Department of Water Resources - Lao PDR

Some rights reserved. This work is available under a CC BY-NC-SA 3.0 IGO licence

© FAO, 2024
CD0079EN/1/03.24